ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 0226 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 05 ກຸມພາ 2021

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້-ຈັດຈ້າງອຸປະກອນສຳລັບ ປັບປຸງລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຊຸດຄຳສັ່ງລະບົບຄຸ້ມຄອງງົບປະມານແຫ່ງລັດ (GFIS) ສະບັບເລກທີ 0373/ກງ, ລົງວັນທີ 20 ມັງກອນ 2021.
- ອີງຕາມ ໜັງສືສະເໜີຂອງສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ສະບັບເລກທີ 0034/ສພຂງ, ລົງວັນທີ 02 ກຸມພາ 2021.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈ ປະມູນຈັດຊື້-ຈັດຈ້າງ ຊາບວ່າ:

1. ຫ້ອງການກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນຳໃຊ້ງົບປະມານປະຈຳປີ 2021 ບ້ວງທຶນເປັນທຶນສະໄໝ ເພື່ອດຳເນີນການຈັດຊື້-ຈັດຈ້າງ ບໍລິສັດຜູ້ສະໜອງອຸປະກອນ ສຳລັບປັບປຸງລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຊຸດຄຳສັ່ງລະບົບຄຸ້ມຄອງງົບປະມານແຫ່ງລັດ (GFIS) ຂອງກະຊວງການເງິນ ດ້ວຍຮູບແບບການດຳເນີນການປະມູນເປີດກວ້າງພາຍໃນ;
2. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈ ເຂົ້າຮ່ວມໃນການປະມູນຄັ້ງນີ້ ຕ້ອງມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ກ່ຽວກັບການສະໜອງອຸປະກອນ ແລະ ພັດທະນາລະບົບໄອທີ ທີ່ມີໜັງສືຢັ້ງຢືນການເສຍພັນທະອ່ວຍສາອາກອນປະຈຳປີ 2020, ຖ້າບໍ່ມີ ໃຫ້ພິມໃບແຈ້ງມອບອາກອນທັງໝົດ ໃນປີ 2020 ມາແທນ;
4. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈຊື້ຊອງປະມູນ ສາມາດຊື້ໄດ້ທີ່ ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ, ກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021 417766, ຂາຍຊອງປະມູນ 1,000.000 ກີບ (ໜຶ່ງລ້ານກີບ)/ຊອງ, ເລີ່ມແຕ່ວັນທີ..10 ກຸມພາ 2021 ຫາ ວັນທີ 26 ມີນາ 2021 ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ໃນວັນດຽວກັນ ທີ່ຫ້ອງປະຊຸມຊັ້ນ 3 ກະຊວງການເງິນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດ/ວິສາຫະກິດ ທີ່ໄດ້ຍື່ນຊອງປະມູນ. ຖ້າສົ່ງພາຍກຳນົດເວລາ ຈະບໍ່ຮັບພິຈາລະນາ;
5. ສຳລັບເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍມາພ້ອມນີ້;
6. ບໍລິສັດ/ວິສາຫະກິດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ ໃຫ້ຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນ.

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ